# ກອງທຶນສົ່ງເສີມ ການເງິນຈຸລະພາກ ເພື່ອຫຼຸດຜ່ອນຄວາມທຸກຍາກ ພາຍໃຕ້ການຮ່ວມມື ລະຫວ່າງທະນາຄານແຫ່ງ ສ.ປ.ປ ລາວ ແລະທະນາຄານພັດທະນາອາຊີ .

## A. ພາກສະເໜີຂອງໂຄງການ.

ວັດຖຸປະສົງລວມ ຂອງກອງທຶນສົ່ງເສີມການເງິນຈຸລະພາກ ແມ່ນຊ່ວຍເຫຼືອລ້າ ເພື່ອພັດທະນາຂະແໜງການເງິນຈຸລະພາກ ໃຫ້ມີການແຂ່ງຂັນບົນພື້ນຖານການຜັນຂະຫຍາຍ 04 **ວິໃສທັດ**ຂອງລັດຖະບານຄື: **❶ ຂະຫຍາຍຈຳນວນຜູ້ເຂົ້າຮ່ວມໃຫ້ຫຼາຍຂື້ນ, ❷ ໃຫ້ມີຫລາຍຮູບແບບກຳມະສິດ, ❸ ໃຫ້ມີຄວາມ ຍືນຍົງແຕ່ເລີ້ມຕົ້ນ,❹ ມີຄວາມປອດໄພໃຫ້ແກ່ຜູ້ຝາກເງິນ.**





ໂດຍເນັ້ນໃສ່ການເຄື່ອນໄຫວທຸລະກິດ ຕາມຫຼັກການຄວາມໝັ້ນຄົງ ແລະ ການຂະຫຍາຍການບໍລິການໃຫ້ເຂົ້າເຖິງຜູ້ທຸກຍາກ ເພື່ອສະໜັບສະໜູນ ການຫລຸດຜອ່ນຄວາມທຸກຍາກ. ໂຄງການດັ່ງກ່າວ ໄດ້ສ້າງຕັ້ງຫນ່ວຍງານບໍລິຫານກອງທຶນການເງິນຈຸລະພາກ ຂື້ນຢູ່ໃນພະແນກການເງິນຈຸລະພາກ ທະນາຄານແຫ່ງ ສ.ປ.ປ ລາວ ເພື່ອເຮັດຫນ້າທີ່ບໍລິຫານ ແລະ ຄຸ້ມຄອງທຶນ ໃຫ້ດຳເນີນໄປຕາມວັດຖຸປະສົງ ໃນການຊ່ວຍເຫຼືອທາງດ້ານທຶນ, ວັດຖຸອຸປະກອນ, ການສ້າງຄວາມອາດສາມາດທາງດ້ານວິຊາການ ໃຫ້ແກ່ບັນດາການເງິນຈຸລະພາກທີ່ຫາກໍ່ຕັ້ງຂື້ນໃຫມ່, ຍັງໜຸ່ມນ້ອຍ ເພື່ອໃຫ້ມີຄວາມຍືນຍົງ ແລະ ຫຼຸດຜ່ອນຄວາມທຸກຍາກ. ກອງທຶນດັ່ງກ່າວນີ້ຍັງຈະໄດ້ເຜີຍແຜ່ການເຄື່ອນໄຫວທຸລະກິດ ຕາມຫຼັກການຄວາມຫມັ້ນຄົງໂດຍຜ່ານການຈັດກອງປະຊຸມ, ສຳມະນາ ແລະ ການຝຶກອົບຮົມວິຊາການຕ່າງໆ ໃຫ້ ແກ່ບັນດາຜູ້ເຄື່ອນໄຫວການເງິນຈຸລະພາກ ແລະ ພະນັກງານຂອງລັດ ເພື່ອກະກຽມເງື່ອນໄຂໜ້າ ວຽກ (TOR) ສຳລັບການສຶກສາການສ້າງຕັ້ງການເງິນຈຸລະພາກລະດັບຊາດ.

## B. ກິດຈະກຳຂອງໂຄງການ.

ໂຄງການດັ່ງກ່າວປະກອບດ້ວຍ 04 ກິດຈະກຳຕົ້ນຕໍດັ່ງນີ້:

1. **ການເຜີຍແຜ່ ກ່ຽວກັບການເງິນຈຸລະພາກ** ໂດຍຜ່ານການຈັດກອງປະຊຸມ - ສຳມະນາ ຂື້ນຫຼາຍຊຸດ, ໃຫ້ແກ່ພະນັກງານຂອງລັດ, ຜູ້ເຄື່ອນໄຫວຕົວຈິງ ດ້ານການເງິນຈຸລະພາກ, NGOs, ຜູ້ໃຫ້ທຶນ, ອົງການຈັດຕັ້ງມະຫາ ຊົນ, ຜູ້ທີ່ມີສ່ວນພົວພັນຕ່າງໆ ແລະ ຍັງໄດ້ນຳສະເໜີບົດຮຽນທີ່ດີເລີດ ດ້ານການງິນຈຸລະພາກ ທີ່ເພື່ອສົ່ງເສີມການເຄື່ອນໄຫວທຸລະກິດການເງິນຈຸລະພາກ ຕາມຫຼັກການ ຄວາມຫມັ້ນຄົງ
2. **ການໃຫ້ທຶນຊ່ວຍເຫຼືອລ້າໃຫ້ແກ່ ສກຈ** ໂດຍມີການອອກທຶນສົມທົບ. ທຶນຊ່ວຍເຫຼືອລ້າ ສາມາດນຳໃຊ້ເພື່ອເປັນທຶນເລີ້ມຕົ້ນ, ຊື້ອຸປະກອນ ແລະການຝຶກອົບຮົມ ເພື່ອສ້າງຄວາມສາມາດ. ກອງທຶນດັ່ງກ່າວນີ້ມີມູນຄ່າທັງໝົດ 800,000 ໂດລາສະ ຫະລັດ



3. **ຈັດຝຶກອົບຮົມໃຫ້ແກ່ຜູ້ບໍລິຫານ ແລະ ພະນັກງານ**ຂອງ ສກຈ ຫົວຂໍ້ຕ່າງໆຂອງການຝຶກອົບຮົມຄື: ການ ຄຸ້ມຄອງບໍລິຫານ ສກຈ, ການຄຸ້ມຄອງການເງິນ, ການບັນຊີ, ລະບົບຂໍ້ມູນຂ່າວສານ, ການລົງຕິດຕາມຢູ່ຂັ້ນທ້ອງຖິ່ນ ເພື່ອຊ່ວຍເຫຼືອດ້ານວິຊາການ ໃນການປັບປຸງການດຳເນີນງານຂອງ ສກຈ.
4. **ການສ້າງຄວາມສາມາດໃຫ້ແກ່ ພະແນກການເງິນຈຸລະພາກ, ທຫລ.** ຈັດຕັ້ງການຝຶກອົບຮົມຕ່າງໆໃຫ້ແກ່ພະນັກງານ ເພື່ອມີຄວາມສາມາດພຽງພໍໃນການ ຊ່ວຍເຫຼືອ ສກຈ ແລະ ຄຸ້ມຄອງກອງທຶນການເງິນຈຸລະພາກ



ບັນດາສະຖາບັນການເງິນຈຸລະພາກ ທີ່ຈະໄດ້ຮັບເງິນຊ່ວຍເຫຼືອລ້າ ຈາກກອງທຶນການເງິນຈຸລະພາກ ດັ່ງກ່າວຕ້ອງສະແດງໃຫ້ເຫັນເຖິງເຈດຈຳນົງ ແລະ ຄວາມສາມາດ ຂອງຕົນໃນການສ້າງເງື່ອນໄຂດຳເນີນກິດຈະກຳແບບຍືນຍົງໃນອະນາຄົດ ໃນການໃຫ້ບໍລິການແກ່ກຸ່ມຄົນຢ່າງກວ້າງຂວາງ ຊຶ່ງໃນນັ້ນລວມທັງເພດຍິງບັນດາເຜົ່າ ແລະ ຜູ້ທຸກຍາກໃນຊົນນະບົດ, ຂໍ້ມູນຕ່າງໆດັ່ງກ່າວຈະໄດ້ປະເມີນໂດຍຜ່ານແຜນທຸລະກິດ ແລະ ແຜນຍຸດທະສາດ ໃນການຂະຫຍາຍຕົວຂອງສະຖາບັນການເງິນຈຸລະພາກນັ້ນ

## C. ການປະສານງານໂຄງການ

ໂຄງການດັ່ງກ່າວ ຈະຖືກຄຸ້ມຄອງໂດຍໜ່ວຍງານບໍລິ ຫານກອງທຶນການເງິນຈຸລະພາກ ຢູ່ພະແນກການເງິນ ຈຸລະພາກ ທະນາຄານແຫ່ງ ສ.ປ.ປ ລາວ, ຊຶ່ງມີທີມງານທີ່ປຶກສາພາຍໃນ ແລະ ຕ່າງປະເທດ ເພື່ອສະໜອງທາງດ້ານການຝຶກອົບຮົມວິຊາການ ແລະ ຊ່ວຍເຫຼືອໜ່ວຍງານບໍລິຫານກອງທຶນການເງິນຈຸລະພາກ ໃນການຮັບຄຳຮ້ອງ, ປະເມີນ, ປ່ອຍທຶນ ແລະ ກວດກາຕິດຕາມການນຳໃຊ້ທຶນຂອງ ສກຈ. ທີມງານທີ່ປຶກສາໃຫ້ການສະໜັບສະໜູນຂະບວນ ການດັ່ງກ່າວ ພ້ອມທັງຈັດການຝຶກອົບຮົມໃນແຕ່ລະໄລຍະ ໂດຍອີງໃສ່ສະພາບຄວາມຕອ້ງການຕົວ ຈິງ.



**ຕິດຕໍ່ພົວພັນຕາມທີ່ຢູ່ ດັ່ງລຸ່ມນີ້:**


1. ໜ່ວຍງານບໍລິຫານກອງທຶນການເງິນຈຸລະພາກ,
ທະນາຄານແຫ່ງ ສປປລາວ
ຊື່: ນາງ ເກສອນ ມະນີວົງ,
ຫົວໜ້າພະແນກການເງິນຈຸນລະພາກ
Email: kesone88@yahoo.com,
Keas@bol.gov.la
Noy_keo@hotmail.com
ຕູ້ ປ ນ: 19, ນະຄອນຫຼວງວຽງຈັນ
ໂທລະສັບ: 020.5 655 753,
ຫອ້ງການ:021-244 355, 219 825
ແຟັກ: 021 -244 355 , 263 044, 213108

2. ຫ້ອງການໂຄງການ, ທຫລ
ຊື່: Ms. Ursula Hammerich
ຕຳແໜ່ງ: ຜູ້ປະສານງານໂຄງການ
Email: uhammerich@maxwellstamp.com
ຕູ້ ປ ນ: 4030, ນະຄອນຫຼວງວຽງຈັນ
ໂທ/ແຟັກ: 021 264 616